# ບົດລາຍງານ

## ການປະຕິບັດຜົນຂອງການຕົກລົງໃນກອງປະຊຸມ CCM ຄັ້ງທີ 3 ວັນທີ 10 ຕຸລາ 2025 ແລະ ກອງປະຊຸມຄະນະສະເພາະກິດ CCM ຄັ້ງ ວັນທີ 20 ພະຈິກ 2025

ຕໍ່ກອງປະຊຸມ CCM ຄັ້ງທີ 4 ວັນທີ 19 ທັນວາ 2025

ທີ່ຫ້ອງປະຊຸມຊັ້ນ 2 ໂຮງແຮມສຸພັດຕາ

# ຫົວຂໍ້ບົດລາຍງານ

I. ກອງປະຊຸມຄົບຄະນະ CCM ຄັ້ງທີ 3 ວັນທີ 10 ຕຸລາ 2025
II. ກອງປະຊຸມຄະນະສະເພາະກິດ CCM ຄັ້ງວັນທີ 20 ພະຈິກ 2025

# I. ກອງປະຊຸມຄົບຄະນະ CCM ຄັ້ງທີ 3 ວັນທີ 10 ຕຸລາ 2025

| ຫົວຂໍ້ຕົກລົງ | ລາຍລະອຽດຂໍ້ແນະນຳ | ຜົນການປະຕິບັດ |
|---|---|---|
| 1. OFV | **ການລົງຕິດຕາມກອດກາວຽກງານສາມພະຍາດ ຄັ້ງຕໍ່ໄປ:** ຕົກລົງເລືອກເອົາ ແຂວງຜົ້ງສາລີ ເປັນແຂວງບຸລິມະສິດ. ຖ້າຫາກເສັ້ນທາງບໍ່ສະດວກ, ໃຫ້ເລືອກເອົາແຂວງຫົວພັນ ຫຼື ແຂວງຊຽງຂວາງ ເປັນອີກທາງເລືອກ. | ▪ ທີມງານຄະນະຕິດຕາມກອດກາຂອງ CCM ໄດ້ລົງຕິດຕາມກອດກາຢູ່ **ແຂວງຊຽງຂວາງ** (ວັນທີ 23-29 ພະຈິກ 2025).<br>▪ ໄດ້ລາຍງານຜົນການຕິດຕາມກອດກາໃນກອງປະຊຸມ ExCom & OC ວັນທີ 8 ທັນວາ 2025 |
| 2. Matching Fund NCLE | **ວຽກງານຄວາມປອດໄພທາງຊີວະພາບ (Biosafety) ສຳລັບສູນ NCLE:** ໃຫ້ເລັ່ງລັດການພັດທະນາ ຄູ່ມືການຄຸ້ມຄອງຄວາມປອດໄພທາງຊີວະພາບ ທີ່ຄ້າງຄາມາເປັນເວລາດົນນານ (ຄາດວ່າຈະສຳເລັດໃນທ້າຍປີ 2026) ແລະ ສູນ NCLE ຕ້ອງຮຽກຮ້ອງໃຫ້ມີການປະກອບສ່ວນຈາກຫຼາຍພາກສ່ວນໃຫ້ເປັນເອກະພາບກັນ. | ▪ ໄດ້ສ້າງຕັ້ງໜ່ວຍງານຄຸ້ມຄອງຄຸນນະພາບ (QM unit) ແລະ ສຳເລັດການຮັບສະໝັກພະນັກງານໃໝ່ 7 ທ່ານ ເພື່ອສະໜັບສະໜູນວຽກງານ Matching Funds (MF).<br>▪ **ຂໍ້ສະເໜີ:** ໃຫ້ສູນ NCLE ສືບຕໍ່ຈັດກອງປະຊຸມພາຍໃນທີມທຸກໆເຄິ່ງເດືອນ ເພື່ອຕິດຕາມຄວາມຄືບໜ້າ ແລະ ປະສານງານຢ່າງໃກ້ຊິດກັບສູນວັນນະໂລກ (NTC), ສູນຕ້ານເອດ (CHAS) ແລະ ສູນມາລາເລຍ (CMPE). |

# I. ກອງປະຊຸມຄົບຄະນະ CCM ຄັ້ງທີ 3 ວັນທີ 10 ຕຸລາ 2025

| ຫົວຂໍ້ຕົກລົງ | ລາຍລະອຽດຂໍ້ແນະນຳ | ຜົນການປະຕິບັດ |
|---|---|---|
| 3. RAI4E (Malaria) | **ການຈັດສັນງົບປະມານວຽກງານ Malaria (RAI4E) ຄືນໃໝ່ຈາກ UNOP:** ຖ້າມີບັນຫາເກີດຂຶ້ນ, ໃຫ້ພາກສ່ວນທີ່ກ່ຽວຂ້ອງປະສານງານໂດຍກົງກັບ UNOP ແລະ ຫວັງວ່າການຕັດງົບປະມານນີ້ ຈະບໍ່ສົ່ງຜົນກະທົບຕໍ່ແຜນການກຳຈັດ Malaria ໃນ ສປປ ລາວ. | ▪ **ການປ່ຽນແປງງົບປະມານ:** ຢືນຢັນການປັບຫຼຸດງົບປະມານລົງ **8%** (ປະມານ 1.3 ລ້ານໂດລາ) ເຊິ່ງເປັນການຕັດງົບປະມານໃນສ່ວນທີ່ບໍ່ຈຳເປັນ, ແຕ່ກອງປະຊຸມຢືນຢັນວ່າ **ກິດຈະກຳບຸລິມະສິດ ແລະ ສິນຄ້າທີ່ຈຳເປັນທັງໝົດແມ່ນຍັງໄດ້ຮັບການຄຸ້ມຄອງ 100%.**<br>▪ **ຍຸດທະສາດ:** ຈະສຸມໃສ່ການນຳໃຊ້ວິທີການ 1-3-7 ໃນທົ່ວປະເທດ ແລະ ຍຸດທະສາດ Reactive Accelerator (iPTf) ໃນເຂດທີ່ມີການລະບາດ. |
| 4. HIV/AIDS | ກອງປະຊຸມສະແດງຄວາມເປັນຫ່ວງກ່ຽວກັບ ງົບປະມານທີ່ບໍ່ພຽງພໍຕາມບຸລິມະສິດວຽກງານປີ 2026 ແລະ ໂຄງການກວດຫາເຊື້ອໃນແມ່ຍິງຖືພາຮ່ວມກັນລະຫວ່າງ ສູນແມ່ ແລະ ເດັກ ກັບ ສູນຕ້ານເອດ ແລະ ພຕພ. ໃຫ້ລາຍງານຕໍ່ການນຳກະຊວງສາທາລະນະສຸກເພື່ອຮັບຊາບ ແລະ ລະດົມທຶນຈາກແຫຼ່ງອື່ນມາສົມທົບ. ຕ້ອງສ້າງນະໂຍບາຍເພື່ອເຊື່ອມສານການບໍລິການສຸຂະພາບແມ່ ແລະ ເດັກ ເຂົ້າກັນ, ກຳນົດກົນໄກການປະສານງານ ແລະ ຄວາມຮັບຜິດຊອບຮ່ວມກັນລະຫວ່າງສູນແມ່ ແລະ ເດັກ ກັບ ສູນຕ້ານເອດ ແລະ ພຕພ. | ▪ ພົບການໃຊ້ຈ່າຍເກີນງົບປະມານ (Overspending) ໃນບາງຂົງເຂດ ເຊັ່ນ: ຜະລິດຕະພັນຢາ (-314,505.67 ໂດລາ) ແລະ ອຸປະກອນການແພດ (-308,107.52 ໂດລາ).<br>▪ **ແຜນຈັດຊື້:** ຫ້ອງການ NPCO ໄດ້ປະສານກັບສູນ CHAS ເພື່ອສົ່ງແຜນການຈັດຊື້ປີ 2026 ໂດຍນຳໃຊ້ເງິນເຫຼືອ (Savings) ໃຫ້ທັນຕາມກຳນົດເວລາ. |

# I. ກອງປະຊຸມຄົບຄະນະ CCM ຄັ້ງທີ 3 ວັນທີ 10 ຕຸລາ 2025

| ຫົວຂໍ້ຕິດຕາມ | ລາຍລະອຽດຂໍ້ແນະນຳ | ຜົນການປະຕິບັດ |
|---|---|---|
| **5. TB** | ງົບປະມານທີ່ບໍ່ໄດ້ນຳໃຊ້ຈາກປີ 2024 ໄດ້ຖືກຍົກມາໃຊ້ໃນປີ 2025 ແລະ ການຈັດລຽງບຸລິມະສິດຄືນໃໝ່ໄດ້ສຳເລັດແລ້ວ.<br>ໃຫ້ສູນວັນນະໂລກ (NTC) ຮ່ວມມືກັບ NPCO ເພື່ອຕິດຕາມການນຳໃຊ້ງົບປະມານໃນທ້ອງຖິ່ນ ໃຫ້ສອດຄ່ອງກັບເປົ້າໝາຍ, ທັນເວລາ ແລະ ມີປະສິດທິພາບສູງ. | ▪ ໄດ້ສຳເລັດການຈັດລຽງບຸລິມະສິດງົບປະມານຄືນໃໝ່ ແລະ ສົ່ງໃຫ້ກອງທຶນໂລກ (GF) ແລ້ວໃນວັນທີ 5 ທັນວາ 2025.<br>▪ **ສິ່ງທ້າທາຍ:** ຍັງຄືກັບວຽກງານ HIV ທີ່ຕ້ອງເລັ່ງສົ່ງແຜນການຈັດຊື້ປີ 2026 ໂດຍນຳໃຊ້ງົບປະມານເງິນເຫຼືອໃຫ້ສຳເລັດ. |
| **6. NPCO** | **ກົນໄກການໂອນເງິນໃຫ້ອົງການປົກຄອງທ້ອງຖິ່ນ:**<br>NPCO ຕ້ອງສ້າງ ກົນໄກການໂອນເງິນໄປຫາຂັ້ນແຂວງ ແລະ ເມືອງ ໃຫ້ມີຄວາມໂປ່ງໃສ ແລະ ຊັດເຈນກ່ຽວກັບການນຳໃຊ້ທຶນ, ຮັບປະກັນວ່າການໃຊ້ຈ່າຍແມ່ນສອດຄ່ອງກັບເປົ້າໝາຍ, ທັນເວລາ ແລະ ມີປະສິດທິພາບສູງ. | ▪ **ການແກ້ໄຂ:** ນອກຈາກການສ້າງກົນໄກຄວາມໂປ່ງໃສແລ້ວ, ຈຸດສຳຄັນແມ່ນການແກ້ໄຂ **ເພດານການຖອນເງິນ 5 ລ້ານກີບ** ທີ່ເປັນອຸປະສັກຕໍ່ການລົງເຮັດວຽກຕົວຈິງ. |

# I. ກອງປະຊຸມຄົບຄະນະ CCM ຄັ້ງທີ 3 ວັນທີ 10 ຕຸລາ 2025

| ຫົວຂໍ້ຕົກລົງ | ລາຍລະອຽດຂໍ້ແນະນຳ | ຜົນການປະຕິບັດ |
|---|---|---|
| **7. ການແຕ່ງຕັ້ງ ຄະນະກຳມະການ ເລືອກຕັ້ງ CCM** | ຄະນະກຳມະການເລືອກຕັ້ງ ປະກອບດ້ວຍ 3 ທ່ານ ຄື: ທ່ານ ປອ. ດຣ. ຄຳແພງ ຟອງລືຊາ, ທ່ານ ດຣ. ກາວິພອນ ສຸດທິ ແລະ ທ່ານ Manav Bhattarai.<br><br>ຄະນະກຳມະການເລືອກຕັ້ງ ໃຫ້ມີໜ້າທີ່ເປັນຄະນະ ກຳມະການສະເພາະກິດ ເຮັດວຽກຮ່ວມມືກັບກອງເລຂາ CCM ເພື່ອສຶກສາຄູ່ມືການເລືອກຕັ້ງສະມາຊິກ CCM ແລະ ຄຳແນະນຳຂອງກອງທຶນໂລກ, ຮັບຮອງສະມາຊິກ CCM ຄືນໃໝ່ ແລະ ຈັດກອງປະຊຸມຄົບຄະນະ CCM ສະເພາະ ກິດ ເພື່ອອະນຸມັດສະມາຊິກໃໝ່ ແລະ ເລືອກຕັ້ງປະທານ ແລະ ຮອງປະທານ CCM. | ▪ **EC ໄດ້ປະຊຸມຮ່ວມກັບກອງເລຂາ CCM:**<br>▪ ວາງ Timeline ໃນການດຳເນີນການຄັດເລືອກ CCMເບື້ອງຕົ້ນ ແລະ ສະເໜີກອງປະຊຸມວັນທີ 20 ພະຈິກ CCM ເພື່ອຮັບຮອງເອົາສະມາຊິກໃໝ່ ສຳເລັດແລ້ວ<br>▪ ໄດ້ສຳເລັດການຄັດເລືອກປະທານ ແລະ ຮອງປະທານ CCM ແລ້ວວັນທີ 20 ພະຈິກ<br>▪ ຍັງສືບຕໍ່ໃນ (Preliminary selection) ສຳລັບ ສະມາຊິກ RMC.<br>▪ ກອງເລຂາ CCM ສົ່ງອີເມລແຈ້ງການເປີດຮັບ ການສະແດງຄວາມຈຳນົງ (EOI) ຫາສະມາຊິກ CCM ທັງໝົດ. ຈາກນັ້ນ EC ຈະສະຫຼຸບລາຍຊື່ (Shortlist) ເພື່ອໃຫ້ກອງປະຊຸມຄົບຄະນະ CCM ລົງຄະແນນສຽງຮັບຮອງໃນວັນທີ **19 ທັນວາ 2025**. ແຕ່ບໍ່ມີ CCM ທ່ານໃດສົ່ງ EOI ມາ.<br>▪ ມີພຽງ ທ່ານ ນາງ Rita ຕາງໜ້າ WHO ໄດ້ອີເຄາະ ແລະ ສະເໜີລາຍຊື່ເຂົ້າຄັດເລືອກ. ຂໍຂອບໃຈຫຼາຍໆ ທີ່ໄດ້ສະລະເວລາເຮັດວຽກຊ່ອຍກອງເລຂາ CCM. |



# ຂໍຂອບໃຈ

ກອງເລຂາ CCM ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງບັນດາທ່ານທີ່ສະຫຼະເວລາອັນມີຄຸນຄ່າປະກອບສ່ວນຊຸກຍູ້ວຽກງານຂອງ CCM ດ້ວຍຄວາມເອົາໃຈໃສ່ຢ່າງຕັ້ງໜ້າ.